# ຫຼັກການນຳປະຊຸມ

## "ການເວົ້າທີ່ປະສົບຄວາມສຳເຣັດ"

ບົດຮຽນການເວົ້າທີ່ປະສົບຄວາມສຳເຣັດນີ້ ໄດ້ຄັດເອົາມາຈາກໜັງສື "ພຣະຄຣິສຕະທັມປະທີບ" ເຫັນວ່າເປັນບົດຮຽນທີ່ດີ ຊຶ່ງໄດ້ສອນບັນດາຜູ້ນຳຫຼາຍຄົນມາແລ້ວ ແລະເຊື່ອວ່າຈະເປັນປໂຍດສຳລັບທ່ານເຫມືອນກັນ ດັ່ງນັ້ນຈຶ່ງໄດ້ຄັດເລືອກແລະພິມອອກແຈກຢາຍໃຫ້ແກ່ບັນດາຜູ້ນຳ ຫຼືຜູ້ທີ່ກຳລັງຈະກ້າວຂື້ນເປັນຜູ້ນຳປະຊຸມ ເພື່ອວ່າການນຳຂອງທ່ານຈະມີປະສິດທິພາບແລະເກີດຜົນ.

ມີເຣື່ອງເລົ່າກັນວ່າ ນັກປາຖະກະຖາຄົນນຶ່ງໄດ້ກ່າວບັນຍາຍໃນທີ່ປະຊຸມຢ່າງຍືດຍາວ ດ້ວຍສຳນຽງອັນໜ້າເບື່ອ ຊວນໃຫ້ຜູ້ຟັງນອນຫຼັບ. ຜູ້ເຂົ້າຮ່ວມປະຊຸມໄດ້ພາກັນຍ່າງອອກຈາກຫ້ອງຢ່າງງຽບໆ ເທື່ອລະຄົນສອງຄົນ ຈົນໃນທີ່ສຸດເຫຼືອພຽງຜູ້ຊາຍຄົນດຽວທີ່ນັ່ງຟັງຈົນຈົບ.
ນັກປາຖະກະຖາຄົນນັ້ນໄດ້ຍ່າງໄປຫາຊາຍທີ່ນັ່ງຟັງພ້ອມກັບຍື່ນມືອອກໄປສັມຜັດແລະກ່າວວ່າ "ຂໍຂອບໃຈນຳທ່ານຫຼາຍໆ ທີ່ອົດສານັ່ງຟັງຂ້າພະເຈົ້າຈົນຈົບ" ຊາຍຄົນນັ້ນຕອບວ່າ, "ບໍ່ເປັນຫຍັງດອກ, ເພາະຂ້າພະເຈົ້າຕ້ອງເປັນຜູ້ບັນຍາຍຊ່ອຍທ່ານ."
ນັກປາຖະກະຖາ.....?????

ນັກປາຖະກະຖາທີ່ມີຊື່ສຽງໂດ່ງດັງທ່ານນຶ່ງໄດ້ກ່າວເຖິງຫຼັກການເວົ້າທີ່ດີໄວ້ວ່າ 1) ມີເຣື່ອງທີ່ຈະເວົ້າ 2) ເວົ້າອອກໄປ 3) ເຊົາເວົ້າ. ການເວົ້າທີ່ປະສົບຄວາມສຳເຣັດມີດັ່ງນີ້:

ໃຫ້ຕຽມພ້ອມ
ຝຶກຊ້ອມໃຫ້ດີ
ມີທ່າທີອັນສງ່າ
ໜ້າຕາໃຫ້ສຸຂຸມ
ທັກທາຍທີ່ປະຊຸມບໍ່ວຽນວົນ
ເລີ້ມຕົ້ນໃຫ້ໂນ້ມນ້າວ
ເຣື່ອງລາວໃຫ້ກຳຊັບ
ຈັບຕາເບິ່ງຜູ້ຟັງ
ສຽງດັງໃຫ້ພໍດີ
ຢ່າໃຫ້ມີຄຳເອີ້...ອ້າ
ເບິ່ງເວລາຕາມຄາດໝາຍ
ມ້ວນທ້າຍໃຫ້ຈັບໃຈ
ຍິ້ມແຍ້ມແຈ່ມໃສຕລອດການເວົ້າ
ເຂົ້າເຖິງຈຸດຝ່າຍວິນຍານ

### 1. ໃຫ້ຕຽມພ້ອມ

ການເປັນຜູ້ນຳປະຊຸມ, ພິທີກອນ, ຜູ້ເທສນາ, ຫຼືຜູ້ສອນພຣະຄັມພີ ທີ່ດີນັ້ນ "ການຕຽມພ້ອມ" ເປັນສິ່ງທີ່

ຈໍາເປັນແລະມີຄວາມສໍາຄັນຫຼາຍ, "ການຕຽມທີ່ດີ ເໝືອນກັບໄດ້ເຮັດສໍາເຣັດໄປແລ້ວເຄິ່ງນຶ່ງ". ຄໍາວ່າ "ພ້ອມ" ໃນທີ່ນີ້ມີຄວາມໝາຍລວມໃນຫຼາຍດ້ານເຊັ່ນ ຮ່າງກາຍ, ຈິດໃຈ, ແລະຈິດວິນຍານ,ມີຂໍ້ມູນ, ມີລາຍການຢູ່ໃນມື ພ້ອມແລ້ວທີ່ຈະນໍາການປະຊຸມໃຫ້ລາບລື້ນ, ບໍ່ຕິດຂັດຫຼືສະດຸດ. ຕຽມພ້ອມທາງດ້ານການອະທິຖານ ແລະຂໍການຊົງນໍາຈາກພຣະເຈົ້າ, ພຣະຄັມພີສອນວ່າ, "...ຈົ່ງມີໃຈພ້ອມຢູ່ສເມີ ເພື່ອພວກທ່ານຈະສາມາດຕອບແກ້ຕົວໄດ້ ຕໍ່ທຸກຄົນທີ່ຖາມພວກທ່ານ" ( 1 ເປໂຕ 3:15 )

ອັຄສາວົກໂປໂລໄດ້ຝາກຄໍາເຕືອນໄປເຖິງຜູ້ຮັບໃຊ້ພຣະເຈົ້າທ່ານນຶ່ງຊື່ ອາຂີໂປ ວ່າ, "ສ່ວນການບົວລະບັດທີ່ເຈົ້າໄດ້ຮັບໃນອົງພຣະຜູ້ເປັນເຈົ້ານັ້ນຈົ່ງລະວັງ ເຮັດໃຫ້ສໍາເຣັດ" ( ໂກໂລຊາຍ 4:17 )

## ໒. ຝຶກຊ້ອມໃຫ້ດີ:

ການປະຊຸມນະມັສການພຣະເຈົ້າ ເປັນວຽກງານຝ່າຍຈິດວິນຍານ ດັ່ງນັ້ນການກ້າວອອກໄປຢືນຢູ່ທາງໜ້າທີ່ປະຊຸມດ້ວຍຄວາມໝັ້ນໃຈນັ້ນບໍ່ແມ່ນສິ່ງທີ່ເກີດຂຶ້ນເອງຕາມທັມະຊາດ ພຽງມື້ນຶ່ງຍາມດຽວ. ແຕ່ເກີດຈາກຄວາມພາກພຽນພະຍາຍາມ, ຝຶກຝົນຕົນເອງດ້ວຍຄວາມຖ່ອມໃຈ ໃຊ້ເວລາດົນນານພໍສົມຄວນ.

ພຣະຄັມພີສັ່ງສອນວ່າ "ຢ່າຕັ້ງຜູ້ທີ່ເຊື່ອໃໝ່ໆ ໃຫ້ເປັນຜູ້ດູແລ ຢ້ານວ່າຈະອວດຕົວຂຶ້ນດ້ວຍຄວາມຈອງຫອງ ແລ້ວກໍຈະຖືກໂທດເໝືອນຢ່າງພະຍາມານ" ( 1 ຕີໂມທຽວ 3:6 ) ຊຶ່ງໄດ້ແກ່ຜູ້ປົກຄອງ, ຜູ້ນໍາ, ຫຼືຜູ້ນໍານະມັສການໃນຄຣິສຕະຈັກ ເປັນຕົ້ນ.

ໃນການທີ່ຄົນໃດຄົນນຶ່ງຈະກ້າວຂຶ້ນເປັນ "ຜູ້ນໍາປະຊຸມ" ນັ້ນ ລາວຈະຕ້ອງມີອ້າຍເອື້ອຍລ້ຽງຝ່າຍຈິດວິນຍານ ເພື່ອໃຫ້ຄໍາແນະນໍາແລະຄອຍຖ້າຊ່ອຍເຫຼືອ, ໃຫ້ເບິ່ງແບບຢ່າງຈາກຜູ້ນໍາປະຊຸມ ຫຼືພິທີກອນຄົນອື່ນທີ່ປະສົບຄວາມສໍາເຣັດ ໃນການຝຶກຊ້ອມດ້ານການເວົ້າ, ການນໍາຮ້ອງເພງ, ແລະການນໍາອະທິຖານເປັນຕົ້ນ.

ບາງຄົນໃຫ້ຄໍາແນະນໍາວ່າ ກ່ອນຈະຮອດມື້ປະຊຸມ ຜູ້ນໍາປະຊຸມຄວນຈະເຂົ້າຫ້ອງອັດປະຕູ ແລ້ວຝຶກຊ້ອມກັບແວ່ນແຍງ ເພື່ອຈະໄດ້ເຫັນທ່າທີ, ລີລາ, ແລະການປາກເວົ້າຂອງຕົນ. ເມື່ອເຫັນສິ່ງໃດຂາດຕົກບົກພ່ອງຫຼືຫຼາຍເກີນໄປກໍຈະໄດ້ແກ້ໄຂໄວ້ກ່ອນ. ອັຄສາວົກໂປໂລ ໄດ້ເວົ້າເຖິງໂຕເພິ່ນເອງວ່າ, "ແຕ່ເຮົາກໍທຸບຕີຮ່າງກາຍຂອງເຮົາໃຫ້ມັນແຂງຢູ່ຄາມື ເພາະຢ້ານວ່າເມື່ອເຮົາໄດ້ປະກາດແກ່ຄົນອື່ນແລ້ວ ເຮົາເອງຈະຖືກຂ້າຊື່ອອກຈາກການແຂ່ງຂັນ" ( 1 ໂກຣິນໂທ 9:27 ) ຊຶ່ງໝາຍຄວາມວ່າ ເພິ່ນສາມາດບັງຄັບຮ່າງກາຍ, ຄວາມຄິດ, ແລະຈິດໃຈຂອງເພິ່ນໄດ້.

ນັກເທດ, ຜູ້ສອນພຣະຄັມພີ, ຫຼືຜູ້ນໍາປະຊຸມ ຄວນຈະເອົາອັຄສາວົກໂປໂລເປັນແບບຢ່າງໃນເຣື່ອງນີ້.

## ໓. ມີທ່າທີອັນສງ່າ:

ທ່ານມີຄວາມຮູ້ສຶກຢ່າງໃດ ເມື່ອທ່ານເຫັນຜູ້ນໍາປະຊຸມຄົນນຶ່ງກ້າວຂຶ້ນໄປເທິງເວທີດ້ວຍຮ່າງກາຍທີ່ໂຊມໆ, ທ່າທາງຫງອຍເຫງົາ, ຍ່າງຄໍຕົກ, ໂຕລີບ, ບໍ່ມີສງ່າຣາສີ, ເມື່ອທຽບໃສ່ກັບອີກຄົນນຶ່ງທີ່ກ້າວຂຶ້ນໄປສູ່ເວທີດ້ວຍທ່າທາງອັນຂຶງຂັງ, ມີສງ່າຣາສີ, ມີຄວາມໝັ້ນໃຈ, ກະຕືລືລົ້ນ ພ້ອມທີ່ຈະນໍາຜູ້ຮ່ວມປະຊຸມເຂົ້າສູ່ການນະມັສການພຣະເຈົ້າ?

ຜູ້ນໍາປະຊຸມ ຄວນຈະຍ່າງອອກໄປປາກົດຕົວຕໍ່ໜ້າສາທາຣະນະຊົນດ້ວຍທ່າທາງອັນມີກຽດ. ພວກເຮົາໄດ້ເຫັນໂຕຢ່າງຈາກອົງພຣະເຢຊູຄຣິດ ເມື່ອພຣະອົງໄປນະມັສການພຣະເຈົ້າທີ່ໂຮງທັມະເທສນາໃນວັນສະບາໂຕ, "...ແລະພຣະອົງຊົງຢືນຂຶ້ນເພື່ອຈະອ່ານພຣະທັມໃຫ້ທີ່ປະຊຸມຟັງ..." ( ລູກາ 4:16-22 ).

4. ໜ້າຕາໃຫ້ສຸຂຸມ :

ຄຳນີ້ເປັນພາສາໄທ ມີຄວາມໝາຍວ່າ ລະອຽດ, ນິ້ມນວນ, ຖ້ອນຖີ່ ແລະມີສະຕິປັນຍາຮອບຄອບ. ແຕ່ໂດຍທົ່ວໄປແລ້ວຄຳວ່າ "ສຸຂຸມ" ໝາຍເຖິງຄົນທີ່ມີໜ້າຕາຮຽບຮ້ອຍ, ສຸພາບ, ວາງຕົວເປັນຜູ້ໃຫຍ່, ມີຄວາມຄິດອ່ານດີ, ແລະເປັນໜ້າໂຄຣົບນັບຖື. ຜູ້ນຳປະຊຸມຫຼືພິທີກອນຈະຕ້ອງວາງທ່າໃຫ້ຮຽບຮ້ອຍ, ໜ້າເຫຼື້ອມໃສ, ຊຶ່ງລວມໄປເຖິງການນຸ່ງເຄື່ອງທີ່ຮຽບຮ້ອຍ ເໝາະສົມກັບກາລະເທສະ ( ເວລາແລະສະຖານທີ່ ) ຜູ້ນຳປະຊຸມຈະບໍ່ມີສີໜ້າວອກແວກ, ເຮັດຫຼິ້ນ, ທ່າທາງບໍ່ຮຽບຮ້ອຍ, ຍົກຄິ້ວຫຼີ່ຕາ ຫຼືແລບລີ້ນປິ້ນຕາຫຍອກຫຼິ້ນກັບຄົນທີ່ຢູ່ຂ້າງຄຽງ.

ພຣະຄັມພີສອນວ່າ, "ຄົນສລາດຄິດກ່ອນຈຶ່ງເວົ້າ, ແລ້ວຄຳເວົ້ານັ້ນກໍເປັນທີ່ຈັບໃຈຫຼາຍ" ( ສຸພາສິດ 16:23 )

5. ທັກທາຍທີ່ປະຊຸມບໍ່ວຽນວົນ :

ຜູ້ນຳປະຊຸມ ຫຼືພິທີກອນ ບໍ່ຈຳເປັນເລີ້ມຕົ້ນດ້ວຍຄຳວ່າ "ສະບາຍດີຂ້ານ້ອຍ" ຫຼື "ທຸກຄົນສະບາຍດີບໍ່" ສເມີໄປ. ບາງຄົນມັກໃຊ້ຄຳໃດຄຳນຶ່ງຈົນຕິດປາກ ຈົນຜູ້ຟັງຈື່ຄຳເວົ້າທີ່ຕິດເປັນນິສັຍຂອງລາວໄດ້.

ການນຳປະຊຸມນະມັສການເປັນເຣື່ອງທີ່ "ສັກສິດ" ເພາະວ່າເປັນການນຳຜູ້ທີ່ມາຮ່ວມປະຊຸມເຂົ້າເຝົ້າພຣະເຈົ້າ, ຢູ່ຕໍ່ພຣະພັກພຣະເຈົ້າ. ດັ່ງນັ້ນຜູ້ນຳປະຊຸມຕ້ອງຂຶງຂັງ, ຈິງຈັງ, ແລະຈິງໃຈ. ລາວຈະເຮັດເປັນຫຼິ້ນບໍ່ໄດ້, ເມື່ອຄິດເຖິງປະໂຣຫິດໃນສມັຍພຣະຄັມພີເດີມ ທີ່ນຳຊົນຊາດອິສຣາເອນເຂົ້າເຝົ້າພຣະເຈົ້າໃນຫໍຜ້າເຕັ້ນ ຜູ້ຊ່ຽວຊານທາງພຣະຄັມພີໄດ້ຕີຄວາມໝາຍ "ປະໂຣຫິດ" ວ່າ ເປັນເໝືອນ "ສະພານ" ຫຼືຂົວ ທີ່ເຊື່ອມຕໍ່ຣະຫວ່າງມະນຸດກັບພຣະເຈົ້າ. "ປະໂຣຫິດເປັນສັນໃດ ບົດບາດຂອງການເປັນຜູ້ນຳປະຊຸມກໍເປັນສັນນັ້ນ"

ຜູ້ນຳປະຊຸມ ຫຼືພິທີກອນ ບໍ່ຄວນເລີ້ມຕົ້ນດ້ວຍການເລົ່ານິທານ, ນິຍາຍ, ຫຼືຄຳພະຍານ ແລະບໍ່ຄວນທາວຄວາມຍາວ ສາວຄວາມຍືດ. ລາວບໍ່ຄວນກ່າວຄຳແກ້ຕົວໃນທຳນອງທີ່ວ່າ, "ຂໍໂທດນຳທີ່ປະຊຸມດ້ວຍເພາະວ່າຂ້າພະເຈົ້າເວົ້າບໍ່ເກັ່ງ" ຫຼືບໍ່ຕ້ອງເວົ້າວ່າ, "ຂ້າພະເຈົ້າຫາກໍຮູ້ມື້ວານນີ້ວ່າຈະໄດ້ເປັນຜູ້ນຳປະຊຸມ ຈຶ່ງຕ້ອງເປັນຜູ້ນຳແບບສຸກເສີນ ອາດຈະມີຄວາມຂາດຕົກບົກພ່ອງ ຫວັງວ່າພີ່ນ້ອງຄົງຈະໃຫ້ອະພັຍ" ແລະອາດຈະເວົ້າໃນອີກທຳນອງນຶ່ງວ່າ, "ຂ້າພະເຈົ້າເວົ້າບໍ່ເປັນ ແຕ່ຖືກບັງຄັບໃຫ້ຂຶ້ນມາເວົ້າ."

ຜູ້ນຳປະຊຸມທີ່ດີຕ້ອງບໍ່ເວົ້າແບບຍຸແຍ່, ຫຍອກຫຼິ້ນກັບບັນດາຜູ້ມາຮ່ວມນະມັສການ ແລະບໍ່ຄວນຍົກເອົາເຣື່ອງປົມດ້ອຍຂອງບາງຄົນຂຶ້ນມາເວົ້າເຊັ່ນຄົນຫົວລ້ານ, ຄົນຕາບອດ, ຫຼືຄົນທີ່ມີອະວັຍຍະວະບາງຢ່າງພິການ. ບໍ່ເວົ້າເຈາະຈົງ ຫຼືເຈາະຈີ້ມກັບຄົນໃດຄົນນຶ່ງໃນເຣື່ອງໃດເຣື່ອງນຶ່ງ ແຕ່ໃຫ້ເວົ້າເປັນສ່ວນລວມກັບໝົດທຸກຄົນ.

6. ເລີ້ມຕົ້ນໃຫ້ໂນ້ມນ້າວ :

ມີຄົນຖາມວ່າ ຜູ້ນຳການນະມັສການຈະເລີ້ມຕົ້ນຢ່າງໃດ? ຄຳຕອບກໍຄື:

ກ. ເລີ້ມດ້ວຍການອະທິຖານເພື່ອຕຽມຈິດໃຈແລະຈິດວິນຍານຂອງຜູ້ຟັງໃຫ້ພ້ອມທີ່ຈະນະມັສການພຣະເຈົ້າ, ມີຫູຝ່າຍຈິດວິນຍານທີ່ຈະຮັບຟັງພຣະສຸຣະສຽງຂອງພຣະອົງ, ແລະມີຕາຝ່າຍຈິດວິນຍານທີ່ຈະແນມເຫັນພຣະຄຳຂອງພຣະເຈົ້າຢ່າງແຈ່ມແຈ້ງ ຊຶ່ງສາມາດນຳໄປໃຊ້ເປັນປໂຍດໃນຊີວິດຂອງຕົນເອງແລະຄົນອື່ນດ້ວຍ.

ຂ. ເລີ້ມດ້ວຍການຮ້ອງເພງສັຣເສີນພຣະເຈົ້າ ອາດຈະເປັນເພງສັ້ນຂອງຄຣິສຕຽນທີ່ມີຄວາມໝາຍເຊັ່ນ "ໃນເວລາຂອງພຣະເຈົ້າ", ຫຼືເພງສັ້ນອື່ນໆ, ອາດຈະຮ້ອງເພງຊີວິດຄຣິສຕຽນກໍໄດ້ ຈະນັ່ງຫຼືຢືນຮ້ອງກໍໄດ້ ແຕ່ສິ່ງສຳຄັນກໍຄືຢ່າໃຫ້ທີ່ປະຊຸມຮ້ອງແຕ່ເພງດຽວຊ້ຳຊາກ ຄືຮ້ອງແຕ່ເພງດຽວວົນໄປວຽນມາເປັນເວລາຫຼາຍນາທີ, ຫຼືໃຫ້ທີ່ປະຊຸມຢືນດົນຈົນເກີນໄປ ຈົນທຸກຄົນເມື່ອຍຂາ ພໍເຖິງເວລາຟັງເທສນາກໍອິດເມື່ອຍແລະພາ

ກັນນ້ອຍໜູບໄປ.

ຄ. ເລີ້ມດ້ວຍການອ່ານພຣະຄັມພີ ໃຫ້ພຣະຄໍາຣັດຂອງພຣະເຈົ້າເປັນຜູ້ນໍາທາງເພື່ອເຂົ້າໄປສູ່ແທ່ນບູຊາຂອງພຣະອົງ. ຂໍ້ພຣະຄັມພີທີ່ຜູ້ນໍາປະຊຸມນໍາມາອ່ານສ່ວນຫຼາຍຈະແມ່ນພຣະທັມເພງສັຣເສີນ, ສຸພາສິດ ຊຶ່ງມີເນື້ອໃນຍ້ອງຍໍສັຣເສີນພຣະເຈົ້າ ແລະເຊີນຊວນໃຫ້ຜູ້ມາຮ່ວມປະຊຸມຕຽມຕົວ, ແລະຕຽມໃຈ ພ້ອມທີ່ຈະນະມັສການພຣະອົງ.

ສິ່ງທີ່ຄວນລະວັງນັ້ນຄື ຜູ້ນໍາປະຊຸມຕ້ອງຮູ້ຕົວເອງວ່າ ລາວບໍ່ແມ່ນຜູ້ສອນພຣະຄັມພີຫຼືນັກເທດ. ສະນັ້ນເມື່ອລາວນໍາພາຜູ້ມາຮ່ວມປະຊຸມອ່ານພຣະຄັມພີແລ້ວ ລາວຈະບໍ່ພະຍາຍາມອະທິບາຍຫຼືຕີຄວາມໝາຍຢ່າງຍືດຍາວ ຈົນຜູ້ມາປະຊຸມສົງສັຍວ່າລາວເປັນຜູ້ນໍາປະຊຸມນະມັສການຫຼືວ່າເປັນນັກເທດກັນແທ້.

ນອກຈາກນັ້ນ ຄວາມສໍາເຣັດໃນການເວົ້າອີກຢ່າງນຶ່ງກໍຄື ການໃຊ້ຖ້ອຍຄໍາງ່າຍໆ ແຈ່ມແຈ້ງ ປະເພດທີ່ວ່າເມື່ອຜູ້ຟັງໄດ້ຟັງແລ້ວບໍ່ຕ້ອງຕີຄວາມໝາຍອີກ ຫຼືບໍ່ຕ້ອງໃຫ້ຄົນຟັງອ້າປາກ, ຕາຄ້າງ, ງົງ, ສັບສົນ, ແລະເກີດຄໍາຖາມຂື້ນໃນໃຈ.

ມີເຣື່ອງເລົ່າກັນວ່າ ຜູ້ຍິງຄົນນຶ່ງໄດ້ໄປຫາໝໍທີ່ໂຮງພະຍາບານສີຣິຣາດ ( ທີ່ບາງກອກ, ປະເທດໄທ ) ເມື່ອຍື່ນໃບນັດແລ້ວ ເຈົ້າໜ້າທີ່ບອກລາວວ່າ, "ໄປນັ່ງຢູ່ຝັ່ງພຸ້ນ ເພື່ອລໍຖ້າເອີ້ນຊື່" ຍິງຄົນນັ້ນກໍອອກຈາກໂຮງພະຍາບານຂີ່ເຮືອຂ້າມຟາກ ໄປນັ່ງລໍຖ້າຢູ່ທີ່ທ່າເຮືອພຣະຈັນ ( ມະຫາວິທຍາລັຍທັມມະສາດ )

ຈົນຕາເວັນບ່າຍຫຼາຍແລ້ວ ກໍຍັງບໍ່ໄດ້ຍິນເອີ້ນຊື່ ລາວຈຶ່ງຂີ່ເຮືອຂ້າມກັບໄປຍັງໂຮງພະຍາບານອີກ ແລະໄດ້ຖາມເຈົ້າໜ້າທີ່ງ ປ່ອງຢ້ຽມບ່ອນຍື່ນໃບນັດວ່າ, "ບໍ່ເຫັນເອີ້ນຊື່ຂອງຂ້ານ້ອຍຈັກເທື່ອ?"
ເຈົ້າໜ້າທີ່ຖາມລາວຄືນວ່າ, "ຍາເອື້ອຍມາເຮັດຫຽັງ?"
ຍິງຄົນນັ້ນຕອບວ່າ, "ມາເຮັດໝັນຂ້ານ້ອຍ"
"ຄັນຊັ້ນ, ຍາເອື້ອຍຕ້ອງໄປທໍາຄວາມສະອາດທີ່ຫ້ອງນໍ້າກ່ອນ", ເຈົ້າໜ້າທີ່ໄດ້ບອກລາວ.

ຍິງຄົນນັ້ນກໍຣີບໄປທີ່ຫ້ອງນໍ້າທັນທີ, ຈັບເອົາຄຸນໍ້າ, ໄມ້ຖູພື້ນ ແລ້ວກໍເລີ້ມທໍາຄວາມສະອາດຫ້ອງນໍ້າເປັນການໃຫຍ່ ຈົນວ່າມີພະຍາບານຄົນນຶ່ງມາພົບເຫັນ ຈຶ່ງອະທິບາຍແກ່ລາວວ່າ, "ໃຫ້ຍາເອື້ອຍທໍາຄວາມສະອາດຮ່າງກາຍ ບໍ່ແມ່ນທໍາຄວາມສະອາດຫ້ອງນໍ້າ."

ເມື່ອໄດ້ເຮັດໝັນແລະຟັກຟື້ນພໍສົມຄວນແລ້ວ ກໍເຖິງເວລາທີ່ຈະຕ້ອງກັບເມືອບ້ານ. ພະຍາບານຖືເຈັ້ຽແຜ່ນນຶ່ງມາຍື່ນໃຫ້ແກ່ລາວ ໃນໜ້າເຈັ້ຽແຜ່ນນັ້ນຂຽນວ່າ, "ຈ່າຍເງິນທີ່ຊ່ອງ 5, ຮັບຢາທີ່ຊ່ອງ 7" ຍິງຄົນນັ້ນກໍຣີບອອກຈາກໂຮງພະຍາບານ ນັ່ງຣົດແທັກຊີ ມຸ້ງໜ້າໄປຈ່າຍເງິນທີ່ສະຖານີໂທຣະທັດສນາມເປົ້າ ແລະຈະໄປລໍຮັບຢາທີ່ອີກທ່ານໝໍຊິດ (ຄລີນິກ) ຈົນປານນີ້ບໍ່ຮູ້ວ່າລາວໄດ້ຈ່າຍເງິນແລະໄດ້ຮັບຢາແລ້ວຫຼືຍັງ???

ນີ້ແມ່ນເຣື່ອງໂຕຢ່າງປະກອບບົດຮຽນ ເລົ່າສູ່ກັນຟັງເພື່ອຊວນຫົວເທົ່ານັ້ນ. ແຕ່ມັນກໍເປັນບົດຮຽນທີ່ດີສອນເຮົາວ່າ "ຖ້າຫາກຄວາມໝາຍບໍ່ແຈ່ມແຈ້ງ ທຸກຢ່າງກໍຜິດພາດໄປໝົດ."

7. <u>ເຣື່ອງລາວໃຫ້ກໍາຊັບ:</u>

ຜູ້ນໍາປະຊຸມ, ນັກເທດ, ຫຼືພິທີກອນ ຈະຕ້ອງຮູ້ຈັກກໍານົດເວລາ, ແລະເຣື່ອງໃນການເວົ້າ ບໍ່ໃຫ້ຍາວຫຼືສັ້ນຈົນເກີນໄປ. ສົມມຸດວ່າມີເວລາໃນການປະຊຸມ 1 ຊົ່ວໂມງ ຈະຕ້ອງມີການແບ່ງສັນປັນສ່ວນເວລາໃຫ້ເໝາະສົມຄືກະເວລາໄວ້ ຫຼືປະມານໄວ້ ເຊັ່ນ:

- ຮ້ອງເພງສັ້ນ 10 ນາທີ
- ອ່ານພຣະຄັມພີ ແລະ ອະທິຖານ 3-5 ນາທີ

- ກ່າວຄໍາພະຍານ 5 ນາທີ
- ຮ້ອງເພງ ແລະ ຖວາຍຊັບ 5 ນາທີ
- ເທສນາ 30 ນາທີ
- ປະກາດວຽກງານຄຣິສຕະຈັກ 5 ນາທີ

8. ຈັບຕາເບິ່ງຜູ້ຟັງ :

ໃນການເປັນນັກເວົ້ານັ້ນ, ສິ່ງສໍາຄັນຮອງລົງມາຈາກການເວົ້າກໍຄື "ສາຍຕາ" ບັນດາຜູ້ຟັງຈະຕອບສນອງຕໍ່ຜູ້ນໍາປະຊຸມ, ນັກເທດ, ຫຼືພິທີກອນ ນ້ອຍຫຼາຍພຽງໃດ ແມ່ນຂຶ້ນຢູ່ກັບສາຍຕາຂອງລາວ.

ຢ່າແນມພຽງຈຸດໃດຈຸດນຶ່ງເທົ່ານັ້ນ, ໂດຍສະເພາະເຄິ່ງບ່ອນທີ່ມີຜູ້ສາວນັ່ງຢູ່ ເພາະອາດຈະເຮັດໃຫ້ເກີດຄວາມເຂົ້າໃຈຜິດໄດ້. ນັກເທດບາງຄົນເວລາເທດ ເອົາແຕ່ແຫງນໜ້າຂຶ້ນເທິງເພດານຫ້ອງ (ແນມຫາກັບແກ້) ແລະບາງຄົນເອົາແຕ່ກົ້ມໜ້າເວົ້າ ( ແນມຫາເງິນຕົກເຮັ່ຽຕາມພື້ນຫ້ອງ)

ຜູ້ນໍາປະຊຸມ, ຫຼືພິທີກອນ ບໍ່ຄວນເຮັດໜ້າແບບຫຍອກຫຼິ້ນ, ຍົກຄິ້ວຫຼິ່ວຕາໃສ່ຜູ້ຟັງ, ຫຼືເຮັດຕາສົ້ມຕາຫວານໃນລັກສະນະຕາຄົນເຈົ້າຊູ້ ເພາະຈະເຮັດໃຫ້ເພດກົງກັນຂ້າມເຂົ້າໃຈຜິດ. ໃນຂະນະທີ່ເວົ້າຈົ່ງກວາດສາຍຕາໄປທົ່ວງ ຫ້ອງ ເພື່ອຈະໄດ້ສັມຜັດກັບຄວາມຮູ້ສຶກແລະການຕອບສນອງຈາກບັນດາຜູ້ຟັງ.

"ດວງຕາເປັນປະຕູຂອງຫົວໃຈ" ຜູ້ນໍາປະຊຸມ, ນັກເທດ, ຫຼືພິທີກອນ ຈະບໍ່ຮູ້ເຖິງການຕອບສນອງຂອງບັນດາຜູ້ຟັງໄດ້ເລີຍ ຖ້າລາວຫາກບໍ່ແນມເບິ່ງດວງຕາຂອງເຂົາເຈົ້າ.

9. ສຽງດັງໃຫ້ພໍດີ :

ນັກເວົ້າທີ່ດີຈະຕ້ອງຮູ້ສອງຢ່າງຄື:

ກ. ຫ້ອງປະຊຸມມີຄວາມກວ້າງເທົ່າໃດ?

ຂ. ມີຜູ້ເຂົ້າຮ່ວມປະຊຸມຈໍານວນເທົ່າໃດ?

ທັງນີ້ກໍເພື່ອຈະໄດ້ປະມານເບິ່ງວ່າ ລາວຄວນຈະໃຊ້ສຽງດັງນ້ອຍຫຼາຍຊ່ຳໃດໃນການເວົ້າ. ເພາະຖ້າຫາກດັ່ງໂພດຄົນຟັງກໍຈະແສບແກ້ວຫູແລະມີຄວາມລໍາຄານໃຈ ແຕ່ຖ້າສຽງຄ່ອຍເກີນໄປ ຄົນຟັງກໍພະຍາຍາມງ່ຽງຫູຟັງ ແລະໃນທີ່ສຸດກໍໝົດຄວາມສົນໃຈ.

ພຣະເຢຊູຊົງເປັນໂຕຢ່າງທີ່ດີສໍາລັບເຮົາ ພຣະອົງສອນຄົນກຸ່ມນ້ອຍແບບນຶ່ງ ແລະເມື່ອຢືນຢູ່ຕໍ່ໜ້າຄົນຈໍານວນຫຼາຍພັນຄົນ ພຣະອົງກໍຊົງສອນອີກແບບນຶ່ງ ພຣະອົງຊົງໃຊ້ເຄື່ອງອຸປກອນທັມມະຊາດເຂົ້າຊ່ອຍໃນການໃຊ້ສຽງເຊັ່ນ ເຮືອ, ທະເລ, ແລະຈ້າຍພູ.

ເມື່ອຜູ້ນໍາປະຊຸມບອກຂໍ້ພຣະຄັມພີ ຫຼືບອກບົດເພງ ລາວຄວນລົ້ມຄືນ 2-3 ເທື່ອ ເພື່ອໃຫ້ບັນດາຜູ້ຟັງໄດ້ຍິນຢ່າງທົ່ວເຖິງກັນ. ຊຶ່ງຈະສັງເກດເຫັນໄດ້ວ່າ ເມື່ອບອກຄັ້ງທໍາອິດບັນດາຜູ້ຮ່ວມປະຊຸມຕ່າງກໍແນມເບິ່ງໜ້າກັນດ້ວຍຄວາມສົງສັຍ ແລະອວ່າຍໜ້າໄປຖາມຄົນທີ່ນັ່ງຢູ່ຂ້າງຕົນ ນັ້ນສະແດງວ່າທີ່ປະຊຸມຍັງບໍ່ທັນໄດ້ຍິນສິ່ງທີ່ຜູ້ນໍາປະຊຸມເວົ້າເທື່ອ.

ຜູ້ນໍາປະຊຸມບາງຄົນເລີ້ມຕົ້ນດ້ວຍການຂຶ້ນໄປຢືນຢູ່ຫຼັງທັມມາດ ເອົາມືເຄາະໄມໂຄຣໂຟນ ກ໋ອກ...ກ໋ອກ...ກ໋ອກ ແລ້ວກໍປ້ອນສຽງໃສ່ໄມໂຄຣໂຟນວ່າ "ອາໂຫຼ, ອາໂຫຼ ນຶ່ງ, ສອງ, ສາມ, ແທສຕິ້ງ....."

ນັກເວົ້າທີ່ດີບໍ່ຄວນເຮັດຢ່າງນັ້ນ ເພາະຈະເສັຽບຸກຄະລິກລັກສະນະຂອງຜູ້ນໍາປະຊຸມ. ຈົ່ງເວົ້າອອກໄປຕາມທີ່ໄດ້ຕຽມໄວ້ແລ້ວ ຖ້າເຄື່ອງຂຍາຍສຽງບໍ່ດີ ຫຼືບໍ່ເຮັດວຽກ ເຈົ້າໜ້າທີ່ຫຼືຜູ້ບົວລະບັດເຄື່ອງຈະທໍາການຊ້ອມແປງ ຫຼືປ່ຽນແປງເອງ.

10. <u>ຢ່າໃຫ້ມີຄຳເອີ້...ອ້າ</u> :

ຜູ້ນຳປະຊຸມ ຫຼືພິທີກອນຕ້ອງຕຽມຕົວລ່ວງໜ້າໄວ້ກ່ອນວ່າ ຈະເວົ້າຫຍັງແດ່, ເວົ້າຕອນໃດ, ແລະເວົ້າຢ່າງໃດ. ຢ່າເປັນພະຍາດຕິດແປດຮຽນແບບພວກດາຣາ ທີ່ໃຊ້ຄຳເວົ້າໂຕງໂຕຍຢ່າງຫຼວງຫຼາຍເຊັ່ນ: ... "ແບບວ່າ","ມັນເປັນອີຫຼັງ", "ແລ້ວກໍ", "ໂອເຄ", ເພື່ອບໍ່ໃຫ້ເສັຽເວລາ", "ຄວາມຮູ້ສຶກນ້ອຍໆ", "ອື່ມ", "ເອີ", "ອ້າ", "ເດີຂ້ານ້ອຍ", "ແມ່ນຫັ້ນແຫຼະ"

11. <u>ເບິ່ງເວລາຕາມຄາດໝາຍ</u> :

ການປະຊຸມແຕ່ລະຄັ້ງມີເວລາຈຳກັດ ຖ້າຫາກມີເວລາເຫຼືອກໍສາມາດຮ້ອງເພງຫຼືປະກາດວຽກງານຄຣິສຕະຈັກເພີ້ມເຕີມໄດ້. ແຕ່ຖ້າເຫັນວ່າເວລາໝົດແລ້ວກໍຕ້ອງຮີບສລູບ ຢ່າເຮັດໃຫ້ຜູ້ຟັງກະວົນກະວາຍໃຈ ແນມເບິ່ງໂມງ ເບິ່ງແລ້ວເບິ່ງອີກ.

ຖ້າເປັນນັກເວົ້າປະເພດວຽນວົນບໍ່ເຂົ້າສູ່ຈຸດຈັກເທື່ອ, "<u>ຍ່າງອ້ອມທົ່ງນາ</u>", ກໍຍິ່ງໜ້າເບື່ອ. ມີນັກເທດຄົນນຶ່ງ ໄດ້ຂຶ້ນທັນມາດແລ້ວ ຖ້າບໍ່ໄລ່ກໍບໍ່ຮູ້ຈັກລົງ ລາວໄດ້ກ່າວເຖິງບຸກຄົນໃນພຣະຄັມພີແຕ່ລະຄົນຈົນເວລາໄດ້ກາຍຕອນທ່ຽງໄປ ແລະຍັງຖາມຄຳຄິດເຫັນຈາກຜູ້ຟັງວ່າ, "ພີ່ນ້ອງທີ່ຮັກ, ຂ້າພະເຈົ້າໄດ້ກ່າວເຖິງອັບຣາຮາມ, ໂມເຊ, ໂຢຊວຍ, ແລະເອຊາຢາແລ້ວ ຕອນນີ້ມາເຖິງເຢເຣມີຢາ ແລ້ວພວກເຮົາຈະເຮັດຢ່າງໃດກັບລາວ?"

ແມ່ຕູ້ຄົນນຶ່ງລຸກຢືນຂຶ້ນທັນທີ ແລະຕອບວ່າ, "ອາຈານຂ້ານ້ອຍ, ໃຫ້ເຢເຣມີຢາ ນັ່ງແທນບ່ອນຂອງຂ້ານ້ອຍກໍໄດ້ ເພາະທ້ອງຂ້ານ້ອຍຈັບໄກ່ແລ້ວ ຊິອອກໄປຊອກຫາຫຍັງກິນຈັກນ້ອຍກ່ອນ."

ນັກເທດ ??????

12. <u>ມ້ວນທ້າຍໃຫ້ຈັບໃຈ :</u>

ຕອນທ້າຍຂອງເວລາເປັນສິ່ງສຳຄັນ ນັກເວົ້າຈະຕ້ອງຮູ້ຈັກມ້ວນທ້າຍ ຫຼືສລູບ ດ້ວຍການຮວບຮວມເອົາເຣື່ອງທີ່ຕົນເວົ້າ ຄືກັບແມ່ຄ້າທີ່ເພີຂີ້ວໃຫ້ລູກຄ້າສາມາດຫິ້ວເອົາໄປກິນທີ່ເຮືອນໄດ້. ສິ່ງສຳຄັນອີກປະການນຶ່ງກໍຄືຢ່າພະຍາຍາມອະທິບາຍຫຼືຕີຄວາມໝາຍຂອງການສລູບຫຼືການມ້ວນທ້າຍໃດໆ ອີກ. ທ່ານໂຢຊວຍ ໄດ້ກ່າວຄຳສລູບແກ່ຊົນຊາດອິສຣາເອນ ຢ່າງປະທັບໃຈວ່າ, "...ຈົ່ງຕັດສິນໃຈໃນມື້ນີ້ວ່າ ພວກທ່ານຈະຮັບໃຊ້ຜູ້ໃດ ຈະຮັບໃຊ້ພຣະຂອງປູ່ຍ່າຕາຍາຍທີ່ປະເທດເມໂຊໂປຕາເມັຽ ຫຼືວ່າພຣະຂອງຊາວອາໂມຣິດ ໃນແຜ່ນດິນທີ່ພວກທ່ານອາສັຍຢູ່ນີ້ ແຕ່ວ່າຂ້າພະເຈົ້າແລະຄອບຄົວຂອງຂ້າພະເຈົ້າຈະຮັບໃຊ້ພຣະຜູ້ເປັນເຈົ້າ." ( ໂຢຊວຍ 24:15 )

13. <u>ຍິ້ມແຍ້ມແຈ່ມໃສຕລອດການເວົ້າ</u> :

ພຣະທັມສຸພາສິດສອນວ່າ, "ຄວາມຊື່ນບານພາໃຫ້ມີສຸຂພາບດີ; ຄວາມໂສກເສົ້າເຮັດໃຫ້ຊີວິດຄ່ອຍໆດັບໄປ" ( ສຸພາສິດ 17:22 ) ອັຄສາວົກໂປໂລໄດ້ເນັ້ນແລ້ວເນັ້ນອີກໃນພຣະຄັມພີໃໝ່ວ່າ, "ຈົ່ງຊົມຊື່ນຍິນດີໃນອົງພຣະຜູ້ເປັນເຈົ້າທຸກເວລາ" ( ຟີລິບປອຍ 4:4 ) ໃບໜ້າທີ່ຍິ້ມແຍ້ມແຈ່ມໃສ ສະແດງວ່າຜູ້ເວົ້າມີຄວາມຊົມຊື່ນຍິນດີ ແລະມີສັນຕິສຸກໃນພຣະເຈົ້າ.

14. <u>ເຂົ້າເຖິງຈຸດຝ່າຍວິນຍານ</u> :

ນີ້ແມ່ນປະການສຸດທ້າຍ ທີ່ຜູ້ນຳປະຊຸມຫຼືພິທີກອນ ອາດຈະເວົ້າຫຼາຍສິ່ງຫຼາຍຢ່າງ ແຕ່ທຸກຢ່າງຕ້ອງສລູບ

ລົງທີ່ "ຈິດວິນຍານ."

"ເພື່ອຈັດຕຽມໄພ່ພົນທັງຫຼາຍຂອງພຣະອົງໃຫ້ເປັນຜູ້ຮັບໃຊ້ທີ່ເຫມາະສົມ ເພື່ອເສີມສ້າງພຣະກາຍຂອງພຣະຄຣິດໃຫ້ຈະເຣີນຂຶ້ນ" ( ເອເຟໂຊ 4:12 )

<u>ຈຸດປະສົງ:</u> ເພງທີ່ຮ້ອງ, ຄໍາອະທິຖານ, ເຣື່ອງທີ່ເລົ່າຫຼືເທສນາ ຈະຕ້ອງມີປໂຍດໃນການເສີມສ້າງຊີວິດຂອງພີ່ນ້ອງຄຣິສຕຽນ ໃຫ້ມີຄວາມເຊື່ອ, ຄວາມເປັນນໍ້ານຶ່ງໃຈດຽວກັນ, ຄວາມຮູ້ໃນພຣະຄໍາຂອງພຣະເຈົ້າ, ແລະຈະເຣີນເຕີບໃຫຍ່ຂຶ້ນໃນຄວາມຮັກຂອງພຣະຄຣິດ.

ຄັດລອກຈາກ "ພຣະທັມປຣະທີບ" ໂດຍ ອ.ຈ. ບົວທອງ ວັງສຸລັດດາ
ຮຽບຮຽງໃຫມ່ ໂດຍ ໄພສານ ສົມສິດທ໌
ຂໍພຣະເຈົ້າຊົງອວຍພຣະພອນ